ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ່ 345/ນຍ

ນະຄອນຫລວງວຽງຈັນ, ວັນທີ 28.09.2007.

# ດຳລັດ
# ວ່າດ້ວຍການ ເຂົ້າ-ອອກ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ ປ ປ ລາວ ສະບັບເລກທີ່ 02/ສພຊ, ລົງວັນທີ່ 06 ພຶດສະພາ 2003.
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ ສະບັບເລກທີ 5652/ຕປທ.ກກສ.1, ລົງວັນທີ 12 ກັນຍາ 2007.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ່ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ວາງອອກ ເພື່ອກຳນົດເງື່ອນໄຂ ແລະ ບັນດາລະບຽບການຕ່າງໆ ກ່ຽວກັບການເຂົ້າ-ອອກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສ ປ ປ ລາວ) ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ.

**ມາດຕາ 2. ການເຂົ້າ-ອອກ**

ການເຂົ້າ-ອອກ ສ ປ ປ ລາວ ແມ່ນການເຂົ້າ-ອອກ ທີ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສ ປ ປ ລາວ.

## ມາດຕາ 3. ການອະທິບາຍຄຳສັບ

ເພື່ອຄວາມເຂົ້າໃຈໃນດຳລັດສະບັບນີ້ ໄດ້ກຳນົດຄວາມໝາຍຂອງບັນດາຄຳສັບໄວ້ດັ່ງນີ້:

3.1. "ພົນລະເມືອງລາວ" ແມ່ນບຸກຄົນທີ່ຖືສັນຊາດລາວ;

3.2. "ຄົນຕ່າງດ້າວ" ແມ່ນບຸກຄົນທີ່ຖືສັນຊາດອື່ນ ແຕ່ເຂົ້າມາຕັ້ງຖິ່ນຖານ, ອາໃສຢູ່ ສ ປ ປ ລາວ ຍາວນານ, ຖືບັດຕ່າງດ້າວ ແລະ ລັດຖະບານຂອງຄົນຕ່າງດ້າວນັ້ນກໍຍັງຮັບຮູ້ຢ່າງເປັນທາງການຢູ່;

3.3. "ຄົນຕ່າງປະເທດ" ໝາຍເຖິງບຸກຄົນທີ່ຖືສັນຊາດອື່ນ ຊຶ່ງເຂົ້າມາ ສ ປ ປ ລາວ ຊົ່ວຄາວ ຫລື ຍາວນານເພື່ອປະຕິບັດໜ້າທີ່ໃດໜຶ່ງ, ເມື່ອໝົດກຳນົດແລ້ວ ກໍກັບຄືນ;

3.4. "ຄົນບໍ່ມີສັນຊາດ" ໝາຍເຖິງບຸກຄົນທີ່ບໍ່ແມ່ນພົນລະເມືອງລາວ ແລະ ບໍ່ສາມາດຢັ້ງຢືນວ່າຕົນມີສັນຊາດໃດ;

3.5. "ສະມາຊິກຄອບຄົວ" ໝາຍເຖິງ ຜົວ ຫລື ເມຍ ແລະ ລູກ.

# ຫມວດທີ II

# ເງື່ອນໄຂ ແລະ ລະບຽບການເຂົ້າ-ອອກ ສ ປ ປ ລາວ

## ມາດຕາ 4. ເງື່ອນໄຂການເຂົ້າ-ອອກ ສ ປ ປ ລາວ

4.1. ພົນລະເມືອງລາວທຸກຄົນ ທີ່ຈະເດີນທາງໄປຕ່າງປະເທດ ຕ້ອງມີເອກະສານເດີນທາງ ຄື: ໜັງສືຜ່ານແດນ ( Passport ) ຫລື ປື້ມຜ່ານແດນ ຫລື ໃບຜ່ານແດນ.

4.2. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈະເຂົ້າມາ ສ ປ ປ ລາວ ຕ້ອງມີໜັງສືຜ່ານແດນ ຫລື ເອກະສານເດີນທາງໃຊ້ແທນໜັງສືຜ່ານແດນ ທີ່ມີກຳນົດໃຊ້ໄດ້ແຕ່ 6 ເດືອນຂຶ້ນໄປ ຫລື ປື້ມຜ່ານແດນ ຫລື ໃບຜ່ານແດນທີ່ຖືກຕ້ອງ.

4.3. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າ ສປປ ລາວ ແມ່ນບຸກຄົນທີ່ຕິດພັນກັບການໂຈລະກຳລະຫວ່າງຊາດ, ບໍ່ເພິ່ງປາດຖະໜາ, ຜູ້ທີ່ພົວພັນເຖິງຄວາມລັບ ແລະ ຄວາມໝັ້ນຄົງແຫ່ງຊາດ ແລະ ບຸກຄົນທີ່ມີພະຍາດຕິດແປດ ຕາມຂໍ້ກຳນົດຂອງກະຊວງສາທາລະນະສຸກ.

4.4. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ພົວພັນເຖິງຄວາມລັບ ແລະ ຄວາມໝັ້ນຄົງແຫ່ງຊາດ ຫລື ພົວພັນກັບຄະດີແພ່ງ ຫລື ຄະດີອາຍາ ທີ່ຢູ່ໃນຂັ້ນຕອນພິພາກສາຢູ່ນັ້ນ ຈະບໍ່ໄດ້ຮັບອະນຸຍາດໃຫ້ເດີນທາງອອກຈາກ ສ ປ ປ ລາວ ຊົ່ວຄາວ ໃນເມື່ອໄດ້ຮັບການສະເໜີ ຈາກອົງການສືບສວນ-ສອບສວນ, ສານ ແລະ ໄອຍະການ.

**ມາດຕາ 5. ລະບຽບການເຂົ້າ-ອອກ ສ ປ ປ ລາວ ຂອງ ພົນລະເມືອງລາວ ແລະ ຄົນຕ່າງດ້າວ**

5.1. ພົນລະເມືອງລາວ ແລະ ຄົນຕ່າງດ້າວທຸກໆຄົນທີ່ນຳໃຊ້ໜັງສືຜ່ານແດນ ເພື່ອເດີນທາງໄປຕ່າງປະເທດ ບໍ່ມີວິຊາແຈ້ງອອກ ສ ປ ປ ລາວ, ຍົກເວັ້ນຜູ້ຖືໜັງສືຜ່ານແດນການທູດ ແລະ ໜັງສືຜ່ານແດນລັດຖະການ.

5.2. ພົນລະເມືອງລາວ ແລະ ຄົນຕ່າງດ້າວທຸກໆຄົນ ທີ່ນຳໃຊ້ໜັງສືຜ່ານແດນ ເພື່ອເດີນທາງໄປປະເທດໃດນຶ່ງ **ຕ້ອງ**ມີວິຊາແຈ້ງເຂົ້າປະເທດດັ່ງກ່າວນັ້ນ, ຍົກເວັ້ນຈະເດີນທາງໄປປະເທດທີ່ມີສັນຍາຍົກເວັ້ນວິຊາກັບ ສ ປ ປ ລາວ ແມ່ນໃຫ້ປະຕິບັດຕາມສັນຍາສອງຝ່າຍ ລະຫວ່າງ ສ ປ ປ ລາວ ກັບ ປະເທດດັ່ງກ່າວນັ້ນ.

5.3. ພົນລະເມືອງລາວທຸກໆຄົນ ທີ່ໃຊ້ປື້ມຜ່ານແດນ ຫລື ໃບຜ່ານແດນ ເພື່ອເດີນທາງໄປປະເທດໃກ້ຄຽງໃດນຶ່ງ ແມ່ນໃຫ້ປະຕິບັດຕາມສັນຍາສອງຝ່າຍ ລະຫວ່າງ ສ ປ ປ ລາວ ກັບປະເທດດັ່ງກ່າວນັ້ນ.

**ມາດຕາ 6. ລະບຽບການເຂົ້າ-ອອກ ສ ປ ປ ລາວ ຂອງ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດທີ່ຈະເຂົ້າມາ ສ ປ ປ ລາວ ຕ້ອງປະຕິບັດຕາມລະບຽບການດັ່ງນີ້:

6.1. ຜູ້ທີ່ຖືໜັງສືຜ່ານແດນການທູດ, ລັດຖະການ ແລະ ທຳມະດາຂອງບັນດາປະເທດທີ່ມີສັນຍາຍົກເວັ້ນວິຊາການທູດ, ລັດຖະການ ແລະ ທຳມະດາ ກັບ ສ ປ ປ ລາວ ທີ່ມີຈຸດປະສົງເຂົ້າມາຢູ່ ສ ປ ປ ລາວ ຕາມຈຸດປະສົງຕ່າງໆ ແມ່ນໃຫ້ປະຕິບັດຕາມສັນຍາສອງຝ່າຍ;

6.2. ຜູ້ທີ່ຖືໜັງສືຜ່ານແດນການທູດ, ລັດຖະການ, ທຳມະດາ ແລະ ເອກະສານເດີນທາງໃດນຶ່ງ ຂອງປະເທດ ທີ່ບໍ່ມີສັນຍາຍົກເວັ້ນວິຊາກັບ ສ ປ ປ ລາວ ທີ່ມີຈຸດປະສົງເຂົ້າມາ ສ ປ ປ ລາວ ຈະຕ້ອງໄດ້ດຳເນີນຕາມຂັ້ນຕອນຕ່າງໆ ໃນການຂໍເອົາວິຊາກ່ອນເຂົ້າມາ ສ ປ ປ ລາວ ນອກຈາກພົນລະເມືອງຂອງປະເທດທີ່ ສ ປ ປ ລາວ ໄດ້ປະກາດຍົກເວັ້ນວິຊາໃຫ້ຝ່າຍດຽວ;

6.3. ຄົນຕ່າງປະເທດທີ່ເຂົ້າມາ ສ ປ ປ ລາວ ຕ້ອງໄດ້ປະກອບໃບແຈ້ງ ເຂົ້າ-ອອກເມືອງຢ່າງຄົບຖ້ວນ ແລ້ວແຈ້ງຕໍ່ເຈົ້າໜ້າທີ່ກວດຄົນເຂົ້າ-ອອກ ເມືອງປະຈຳດ່ານ;

6.4. ຄົນຕ່າງປະເທດທີ່ຖືປື້ມຜ່ານແດນ ຫລື ໃບຜ່ານແດນເຂົ້າມາ ສ ປ ປ ລາວ ແມ່ນໃຫ້ປະຕິບັດຕາມສັນຍາສອງຝ່າຍ.

**ມາດຕາ 7. ລະບຽບການອອກວີຊາ**

7.1. ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ແຫ່ງ ສ ປ ປ ລາວ ແລະ ໜ່ວຍງານວີຊາກັບດ່ານສາກົນ ສາມາດອອກວີຊາທ່ອງທ່ຽວ, ວີຊາໄລຍະສັ້ນ ແລະ ວີຊາຜ່ານ ໃຫ້ແກ່ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີເງື່ອນໄຂຄົບຖ້ວນ. ສຳລັບວີຊາປະເພດອື່ນໆ ຕ້ອງໄດ້ຮັບການເຫັນດີ ຈາກກົມກົງສຸນກະຊວງການຕ່າງປະເທດສາກ່ອນ.

7.2. ກໍລະນີ ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ກຳສະພາບການເຄື່ອນໄຫວຂອງບຸກຄົນທີ່ມີຈຸດປະສົງຈະເຂົ້າມາ ສ ປ ປ ລາວ ບໍ່ໄດ້ດີ, ຕ້ອງໄດ້ຖາມຄຳເຫັນຈາກກະຊວງການຕ່າງປະເທດສາກ່ອນ ແລະ ສຳລັບໜ່ວຍງານວີຊາກັບດ່ານ ຕ້ອງໄດ້ຂໍຄຳເຫັນຈາກກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ.

## ໝວດທີ III

## ອົງການທີ່ມີສິດອອກໜັງສືຜ່ານແດນ, ປຶ້ມຜ່ານແດນ, ໃບຜ່ານແດນ ແລະ ອອກວີຊາ ຂອງ ສ ປ ປ ລາວ

**ມາດຕາ 8. ອົງການທີ່ມີສິດອອກໜັງສືຜ່ານແດນ, ປຶ້ມຜ່ານແດນ ແລະ ໃບຜ່ານແດນ**

8.1. ກະຊວງການຕ່າງປະເທດ ແຫ່ງ ສ ປ ປ ລາວ ມີສິດອອກ ແລະ ຕໍ່ອາຍຸໜັງສືຜ່ານແດນການທູດ, ລັດຖະການ ແລະ ໜັງສືຜ່ານແດນທຳມະດາ ໃຫ້ແກ່ພົນລະເມືອງລາວ.

8.2. ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ສ ປ ປ ລາວ ແລະ ຫ້ອງການພົວພັນຕ່າງປະເທດຂອງແຂວງ ມີສິດຕໍ່ອາຍຸໜັງສືຜ່ານແດນທຳມະດາ ໃຫ້ພົນລະເມືອງລາວ.

8.3. ສະຖານເອກອັກຄະລັດຖະທູດ ແລະ ສະຖານກົງສຸນໃຫຍ່ ສ ປ ປ ລາວ ມີສິດຕໍ່ອາຍຸໜັງສືຜ່ານແດນການທູດ ແລະ ລັດຖະການ ແຕ່ຕ້ອງໄດ້ຮັບຄຳເຫັນດີຈາກກະຊວງການຕ່າງປະເທດສາກ່ອນ.

8.4. ກະຊວງປ້ອງກັນຄວາມສະຫງົບ ມີສິດອອກ ແລະ ຕໍ່ປຶ້ມຜ່ານແດນ ແລະ ໃບຜ່ານແດນໃຫ້ພົນລະເມືອງລາວ.

**ມາດຕາ 9. ອົງການທີ່ມີສິດອອກວີຊາ ເຂົ້າ-ອອກ ສ ປ ປ ລາວ**

9.1. ກະຊວງການຕ່າງປະເທດ ສ ປ ປ ລາວ ມີສິດອອກວີຊາ ເຂົ້າ-ອອກປະເທດໄດ້ໜຶ່ງເທື່ອ ແລະ ຫຼາຍເທື່ອ.

9.2. ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ແລະ ໜ່ວຍງານວີຊາກັບດ່ານສາກົນ ມີສິດອອກວີຊາເຂົ້າ ສ ປ ປ ລາວ ໄດ້ໜຶ່ງເທື່ອ.

## ໝວດທີ່ IV

## ວີຊາ ເຂົ້າ-ອອກ ຂອງ ສ ປ ປ ລາວ

**ມາດຕາ 10. ປະເພດວີຊາ**

ວີຊາ ເຂົ້າ-ອອກ ສ ປ ປ ລາວ ມີທັງໝົດ 12 ປະເພດ ດັ່ງນີ້:

| | | | | |
|---|---|---|---|---|
| (1) | ວີຊາ ການທູດ | Diplomatic Visa | ຈະມີລະຫັດ | D - A 1 |
| (2) | ວີຊາ ລັດຖະການ | Service Visa | ຈະມີລະຫັດ | S - A 2 |
| (3) | ວີຊາ ອັດທະຍາໄສ | Courtesy Visa | ຈະມີລະຫັດ | C - B 1 |
| (4) | ວີຊາ ທ່ອງທ່ຽວ | Tourism Visa | ຈະມີລະຫັດ | T - B 3 |
| (5) | ວີຊາ ໄລຍະສັ້ນ | Non immigrant Visa | ຈະມີລະຫັດ | N I - B 3 |
| (6) | ວີຊາ ໄລຍະຍາວ | Immigrant Visa | ຈະມີລະຫັດ | I - B 3 |
| (7) | ວີຊາ ຊ່ຽວຊານ | Expert Visa | ຈະມີລະຫັດ | E - B 2 |
| (8) | ວີຊາ ຜ່ານ | Transit Visa | ຈະມີລະຫັດ | TR - B 3 |
| (9) | ວີຊາ ທຸລະກິດ | Business Visa | ຈະມີລະຫັດ | N I - B 2 ຫລື I - B 2 |
| (10) | ວີຊາ ນັກສຶກສາ | Student Visa | ຈະມີລະຫັດ | ST - B 2 |
| (11) | ວີຊາ ນັກຂ່າວ | Mass Media Visa | ຈະມີລະຫັດ | M - B 2 |
| (12) | ວີຊາ ແຮງງານ | Labour Visa | ຈະມີລະຫັດ | L A- B 2 |

**ມາດຕາ 11. ຫລັກການນຳໃຊ້ ວີຊາແຕ່ລະປະເພດ**

11.1. **ວີຊາ ການທູດ** Diplomatic Visa ( D- A 1 ): ແມ່ນອອກໃຫ້ແກ່: ນັກການທູດລັດຖະກອນກົງສຸນທີ່ມີຊັ້ນອະນຸເລຂາຂຶ້ນໄປ, ຜູ້ຕາງໜ້າ ແລະ ຮອງຜູ້ຕາງໜ້າອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນໆ ພ້ອມດ້ວຍສະມາຊິກຄອບຄົວທີ່ຖືກແຕ່ງຕັ້ງມາປະຕິບັດໜ້າທີ່ຢູ່ ສ ປ ປ.ລາວ ຫລື ມີຈຸດປະສົງເຂົ້າມາພົວພັນວຽກງານຢູ່ ສປປ.ລາວ ໂດຍມີໜັງສືສະເໜີຈາກອົງການທີ່ກ່ຽວຂ້ອງ.

11.2. **ວີຊາ ລັດຖະການ** Service Visa ( S - A 2 ): **ແມ່ນອອກໃຫ້ແກ່:** ພະນັກງານບໍລິຫານ-ເຕັກນິກ ປະຈຳສະຖານທູດ ແລະ ສະຖານກົງສຸນ ພ້ອມດ້ວຍສະມາຊິກຄອບຄົວ.

11.3. **ວີຊາ ອັດທະຍາໄສ** Courtesy Visa ( C - B 1): **ອອກໃຫ້ແກ່:**

(1) ພະນັກງານຫ້ອງການ ການຮ່ວມມືໃນກອບການພົວພັນສອງຝ່າຍ, ພະນັກງານອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນໆ ປະຈຳຫ້ອງການສຳນັກງານຜູ້ຕາງໜ້າຂອງຕົນຢູ່ ສ ປ ປ ລາວ;

(2) ຊ່ຽວຊານ ຫລື ນັກວິຊາການຕ່າງປະເທດ ທີ່ມາໃນນາມໂຄງການ ການຮ່ວມມື ລະຫວ່າງສອງລັດຖະບານ;

(3) ຊ່ຽວຊານ ຫລື ນັກວິຊາການຕ່າງປະເທດ ຂອງອົງການອາສາສະໝັກຂອງຕ່າງປະເທດ ທີ່ມາຕາມໂຄງການຊ່ວຍເຫຼືອລ້າ ແກ່ລັດຖະບານລາວ.

(4) ຊ່ຽວຊານທີ່ເຂົ້າມາເກັບກຳຂໍ້ມູນ ທີ່ຈະອະນຸມັດໃຫ້ເງິນກູ້ຢືມແກ່ລັດຖະບານລາວ;

(5) ຊ່ຽວຊານຕ່າງປະເທດທີ່ຖືກເຊື້ອເຊີນເຂົ້າມາຈັດສຳມະນາ,ຝຶກອົບຮົມ ຫລື ປາຖະກະຖາ;

(6) ພະນັກງານຮັບໃຊ້ຢູ່ໃນສະຖານທູດ, ສະຖານກົງສຸນ ແລະ ທີ່ພັກສ່ວນຕົວຂອງນັກການທູດ ທີ່ບໍ່ແມ່ນຄົນສັນຊາດລາວ;

(7) ບຸກຄົນສຳຄັນທີ່ນອນຢູ່ໃນແຜນການເຄື່ອນໄຫວ ແລະ ຍາດແຍ່ງ ແລະ ບຸກຄົນກິດຕິມະສັກ;

(8) ສະມາຊິກຄອບຄົວຂອງບຸກຄົນທີ່ລະບຸໄວ້ໃນຂໍ້ 11.3.

11.4. **ວີຊາ ທຸລະກິດ** Business Visa ( NI - B 2 **ຫລື** I - B 2 ) **ອອກໃຫ້ແກ່:**

- ນັກທຸລະກິດຊາວຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ທີ່ມາລົງທຶນ ຫລື ເກັບກຳຂໍ້ມູນທາງດ້ານທຸລະກິດຢູ່ ສ ປ ປ ລາວ.

11.5. **ວີຊາ ໄລຍະສັ້ນ** Non Immigrant Visa ( NI - B 3 ) **ອອກໃຫ້ແກ່:**

(1) ນັກວິຊາການຕ່າງປະເທດ ທີ່ບໍ່ໄດ້ຖືກເຊື້ອເຊີນ ແຕ່ໄດ້ຮັບອະນຸຍາດໃຫ້ມາຝຶກອົບຮົມ ຫລື ມາທັດສະນະສຶກສາຊົ່ວຄາວ ຢູ່ ສ ປ ປ ລາວ;

(2) ພະສົງ, ສຳມະເນນ, ນັກບວດ, ນັກກິລາ, ນັກສິນລະປິນຕ່າງປະເທດທີ່ມີຈຸດປະສົງເຂົ້າມາ ສ ປ ປ ລາວ ເພື່ອຮ່ວມງານບຸນ ຫລື ເຄື່ອນໄຫວ ຢູ່ ສ ປ ປ ລາວ;

(3) ຄົນຕ່າງປະເທດທີ່ມີຈຸດປະສົງເຂົ້າມາຢ້ຽມຢາມ ພໍ່, ແມ່, ພີ່ນ້ອງ, ໝູ່ເພື່ອນ, ເກັບກຳຂໍ້ມູນການລົງທຶນ, ພົວພັນການຄ້າ ແລະ ຈຸດປະສົງອື່ນໆທີ່ຊອບທຳ.

11.6. **ວີຊາ ໄລຍະຍາວ** Immigrant Visa ( I - B 3 ) ອອກໃຫ້ແກ່ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດໃຫ້ມາດຳລົງຊີວິດ ຢ່າງຖາວອນ ຢູ່ ສ ປ ປ ລາວ.

11.7. **ວີຊາ ຊ່ຽວຊານ** Expert Visa ( E - B 2 ) **ອອກໃຫ້ແກ່:**

(1) ຊ່ຽວຊານ, ພະນັກງານວິຊາການ ຂອງອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ( NGOs ) ທີ່ເຂົ້າມາເຄື່ອນໄຫວວຽກງານຢູ່ ສ ປ ປ ລາວ;

(2) ຊ່ຽວຊານທີ່ມາຕາມສັນຍາຈ້າງ ຫລື ສັນຍາຮັບເໝົາກິດຈະການຈາກພາກລັດ, ພາກເອກະຊົນ ຫລື ອົງການຈັດຕັ້ງສາກົນຕ່າງໆ;

(3) ຊ່ຽວຊານທີ່ເຂົ້າມາຕິດຕາມໂຄງການຕາມສັນຍາເງິນກູ້;

(4) ສະມາຊິກຄອບຄົວຂອງບຸກຄົນທີ່ໄດ້ລະບຸໄວ້ໃນຂໍ້ 11.7.

11.8. **ວີຊາ ນັກສຶກສາ** Student Visa ( ST - B 2 ) ອອກໃຫ້ແກ່ນັກສຶກສາທີ່ມາສຶກສາ, ເກັບກຳຂໍ້ມູນ ຫລື ຝຶກງານຢູ່ ສ ປ ປ ລາວ.

11.9. **ວີຊາ ນັກຂ່າວ** Mass Media Visa ( M - B 2 ) ອອກໃຫ້ແກ່ນັກຂ່າວຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາເກັບກຳຂ່າວຢູ່ ສ ປ ປ ລາວ.

11.10. **ວີຊາ ທ່ອງທ່ຽວ** Tourism Visa ( T - B 3 ) ອອກໃຫ້ແກ່ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີຈຸດປະສົງເຂົ້າມາທ່ອງທ່ຽວຢູ່ ສ ປ ປ ລາວ.

11.11. **ວີຊາຜ່ານ** Transit Visa ( VTR - B 3 ) ອອກໃຫ້ແກ່ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີຈຸດປະສົງເດີນທາງຜ່ານ ສ ປ ປ ລາວ ເພື່ອໄປປະເທດອື່ນ.

11.12. **ວີຊາ ແຮງງານ** Labour Visa ( LA - B 2 ) ອອກໃຫ້ແກ່ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີຈຸດປະສົງເຂົ້າມາອອກແຮງງານ ຢູ່ ສ ປ ປ ລາວ.

## ໝວດທີ V
## ກຳນົດພັກເຊົາ ແລະ ການຂຶ້ນທະບຽນ ຢູ່ ສ ປ ປ ລາວ

### ມາດຕາ 12. ກຳນົດໄລຍະພັກເຊົາຊົ່ວຄາວ ຢູ່ ສ ປ ປ ລາວ

12.1. ເຈົ້າໜ້າທີ່ດ່ານຕຳຫຼວດກວດຄົນເຂົ້າ-ອອກ ເມືອງເປັນຜູ້ກຳນົດໄລຍະພັກເຊົາຢູ່ ສ ປ ປ ລາວ ຕາມຫລັກການດັ່ງນີ້:

(1) ຜູ້ທີ່ໄດ້ຮັບວິຊາ ຈາກສະຖານເອກອັກຄະລັດຖະທູດ ຫລື ສະຖານກົງສຸນໃຫຍ່ ຂອງ ສ ປ ປ ລາວ ທີ່ຕ່າງປະເທດ, ເວລາແຈ້ງເຂົ້າເມືອງ ເຈົ້າໜ້າທີ່ຈະອະນຸຍາດພັກເຊົາ ໃນໄລຍະກຳນົດ 60 ວັນ, ຍົກເວັ້ນວິຊາຜ່ານແມ່ນກຳນົດ 7 ວັນ;

(2) ຜູ້ທີ່ໄດ້ຮັບວິຊາກັບດ່ານ ເຈົ້າໜ້າທີ່ຈະອະນຸຍາດພັກເຊົາ ໃນໄລຍະກຳນົດ 30 ວັນ;

(3) ຄົນຕ່າງປະເທດທີ່ເດີນທາງມາຈາກປະເທດທີ່ມີສັນຍາຍົກເວັ້ນວິຊາ ກັບ ສ ປ ປ ລາວ ເຈົ້າໜ້າທີ່ຈະອະນຸຍາດພັກເຊົາ ຕາມກຳນົດທີ່ໄດ້ຕົກລົງໃນສັນຍາສອງຝ່າຍ.

12.2. ຄົນຕ່າງປະເທດ ທີ່ຖືໜັງສືຜ່ານແດນ ( Passport ) ແລະ ຄົນບໍ່ມີສັນຊາດທີ່ຖືເອກະສານເດີນທາງໃດນຶ່ງ ເຂົ້າມາ ສ ປ ປ ລາວ ຫາກມີຈຸດປະສົງຢູ່ເກີນກຳນົດທີ່ເຈົ້າໜ້າທີ່ກຳນົດໃຫ້ນັ້ນ ຕ້ອງໄດ້ສະເໜີ ຂໍຕໍ່ຢູ່ກົມຕຳຫຼວດກວດຄົນ ເຂົ້າ-ອອກເມືອງ ກະຊວງປ້ອງກັນຄວາມສະຫງົບ ຫລື ກອງບັນຊາການ ປ ກ ສ ແຂວງ. ສຳລັບຜູ້ຖືປື້ມຜ່ານແດນ ຫລື ໃບຜ່ານແດນເຂົ້າມາ ແມ່ນໃຫ້ສະເໜີຂໍຕໍ່ ຢູ່ ກອງບັນຊາການ ປ ກ ສ ແຂວງ ຫລື ກອງບັນ ຊາການ ປ ກ ສ ນະຄອນຫລວງ ກ່ອນໝົດກຳນົດ 3 ວັນ.

## ມາດຕາ 13. ການຂຶ້ນທະບຽນ ຢູ່ ສ ປ ປ ລາວ

13.1. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາປະຕິບັດໜ້າທີ່ຢູ່ ສ ປ ປ ລາວ ຕາມຖານະດັ່ງລຸ່ມນີ້ ຕ້ອງຂຶ້ນທະບຽນ ແລະ ຂໍບັດປະຈຳຕົວ ຢູ່ກົມພິທີການທູດ ກະຊວງການຕ່າງປະເທດ:

(1) ເອກອັກຄະລັດຖະທູດ, ອຸປະທູດ, ກົງສຸນໃຫຍ່, ນັກການທູດ, ນັກການກົງສຸນ, ຫົວໜ້າ ແລະ ຮອງຜູ້ຕາງໜ້າອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນໆ ແລະ ຜູ້ຊົງຄຸນວຸດທິທີ່ມີຖານະທຽບເທົ່າກັບນັກການທູດ ພ້ອມດ້ວຍສະມາຊິກຄອບຄົວຂອງເຂົາເຈົ້າ;

(2) ພະນັກງານບໍລິຫານ-ເຕັກນິກປະຈຳສະຖານທູດ ແລະ ສະຖານກົງສຸນ, ພະນັກງານຫ້ອງການການຮ່ວມມື ໃນກອບການພົວພັນສອງຝ່າຍ, ພະນັກງານອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນໆ ປະຈຳຫ້ອງການສຳນັກງານຜູ້ຕາງໜ້າຂອງຕົນຢູ່ ສ ປ ປ ລາວ, ພະນັກງານຮັບໃຊ້ຢູ່ສະຖານທູດ, ສະຖານກົງສຸນ ແລະ ທີ່ພັກສ່ວນຕົວຂອງນັກການທູດ ທີ່ບໍ່ແມ່ນພົນລະເມືອງລາວ ພ້ອມດ້ວຍສະມາຊິກຄອບຄົວຂອງເຂົາເຈົ້າ.

13.2. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ບໍ່ໄດ້ກໍານົດຢູ່ໃນຂໍ້ 13.1. ທີ່ເຂົ້າມາປະຕິບັດໜ້າທີ່ ຢູ່ ສ ປ ປ ລາວ ຕ້ອງຂຶ້ນທະບຽນ ແລະ ຂໍບັດປະຈໍາຕົວ ຢູ່ກົມຕໍາຫລວດກວດຄົນເຂົ້າ-ອອກ ເມືອງ ກະຊວງປ້ອງກັນຄວາມສະຫງົບ.

13.3. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາປະຕິບັດໜ້າທີ່ ຢູ່ ສ ປ ປ ລາວ **ແຕ່ 2 ເດືອນ ຫາ 1 ປີ,** ກົມພິທີການທູດ ກະຊວງການຕ່າງປະເທດ ແລະ ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ກະຊວງປ້ອງກັນຄວາມສະຫງົບ ຈະບໍ່ອອກບັດປະຈໍາຕົວໃຫ້ ແຕ່ຈະຂຶ້ນທະບຽນຢູ່ຊົ່ວຄາວໃຫ້.

**13.4.** ບັດປະຈໍາຕົວຈະອອກໃຫ້ຕາມປະເພດ ແລະ ຖານະຂອງບຸກຄົນ ທີ່ເຂົ້າມາປະຕິບັດໜ້າທີ່ຢູ່ ສ ປ ປ ລາວ ທີ່ມີວີຊາເຂົ້າ ສ ປ ປ ລາວ ຢ່າງຖືກຕ້ອງ ແລະ ຈະຕໍ່ໃຫ້ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ ໂດຍອີງໃສ່ຄວາມຈໍາເປັນ ແລະ ກໍານົດເວລາໃນການສືບຕໍ່ປະຕິບັດໜ້າທີ່ຂອງພວກກ່ຽວ.

**ມາດຕາ 14. ກໍານົດບັດປະຈໍາຕົວ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດທີ່ດໍາລົງຊີວິດຊົ່ວຄາວ ຢູ່ ສ ປ ປ ລາວ**

14.1. ບັດປະຈໍາຕົວທີ່ອອກໃຫ້ ໂດຍກົມພິທີການທູດ ກະຊວງການຕ່າງປະເທດ ມີກໍານົດໃຊ້ໄດ້ 3 ປີ.

14.2. ບັດປະຈໍາຕົວທີ່ອອກໃຫ້ ໂດຍກົມຕໍາຫລວດກວດຄົນເຂົ້າ-ອອກເມືອງ ກະຊວງປ້ອງກັນຄວາມສະຫງົບ ມີກໍານົດໃຊ້ໄດ້ 2 ປີ, ນອກຈາກບັດປະຈໍາຕົວທີ່ອອກໃຫ້ບຸກຄົນກິດຕິມະສັກ ທີ່ມີການຢັ້ງຢືນຈາກລັດຖະບານ ຊຶ່ງມີກໍານົດ 5 ປີ.

14.3. ພາຍຫລັງສິ້ນສຸດການປະຕິບັດໜ້າທີ່ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດຢູ່ ສ ປ ປ ລາວ ແລ້ວ. ສະຖານທູດ ຫລື ອົງການກ່ຽວຂ້ອງທີ່ຮັບຜິດຊອບ ຕ້ອງແຈ້ງ ແລະ ສົ່ງບັດປະຈໍາຕົວຄືນໃຫ້ພາກສ່ວນທີ່ອອກບັດ ພາຍໃນກໍານົດ 5 ວັນຫລັງຈາກຜູ້ກ່ຽວເດີນທາງອອກຈາກ ສ ປ ປ ລາວ.

## ໝວດທີ VI
## ເງື່ອນໄຂການອອກ ວີຊາ ເຂົ້າ-ອອກ ສ ປ ປ ລາວ ຫລາຍເທື່ອ ແລະ ກໍານົດເວລາການອອກໜັງສືຜ່ານແດນ ແລະ ວີຊາ

**ມາດຕາ 15. ເງື່ອນໄຂຜູ້ທີ່ຈະໄດ້ຮັບ ວີຊາ ເຂົ້າ-ອອກ ສ ປ ປ ລາວ ຫລາຍເທື່ອ**

15.1. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ປະຕິບັດໜ້າທີ່ ຢູ່ ສ ປ ປ ລາວ ເກີນ 60 ວັນຂຶ້ນໄປ ຊຶ່ງໄດ້ຮັບການຂຶ້ນທະບຽນຊົ່ວຄາວ ຫລື ມີບັດປະຈໍາຕົວແລ້ວ.

15.2. ວີຊາ ເຂົ້າ-ອອກ ສ ປ ປ ລາວ ຫລາຍເທື່ອ ມີກຳນົດເທົ່າກັບອາຍຸຂອງການຂຶ້ນທະບຽນຊົ່ວຄາວ ຫລື ບັດປະຈຳຕົວ.

15.3. ນັກການທູດທີ່ຖືກແຕ່ງຕັ້ງປະຈຳ ສ ປ ປ ລາວ ແຕ່ມີສຳນັກງານສະຖານທູດປະຈຳຢູ່ປະເທດອື່ນ ທີ່ມີຈຸດປະສົງທຽວເຂົ້າ-ອອກ ສ ປ ປ ລາວ ເພື່ອປະຕິບັດໜ້າທີ່ຂອງຕົນ ຈະໄດ້ຮັບວີຊາເຂົ້າ-ອອກ ສ ປ ປ ລາວ ຫລາຍເທື່ອ ໂດຍອີງຕາມຄວາມຈຳເປັນ ແລະ ຕາມການສະເໜີຂອງສະຖານທູດທີ່ກ່ຽວຂ້ອງ.

15.4. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາປະຕິບັດໜ້າທີ່ ຢູ່ ສ ປ ປ ລາວ ໄລຍະສັ້ນ ແຕ່ 2 ເດືອນ ຫາ 1 ປີ ທີ່ໄດ້ຂຶ້ນທະບຽນຊົ່ວຄາວ ຢູ່ກົມພິທີການທູດ ກະຊວງການຕ່າງປະເທດ ຫລື ກົມຕຳຫລວດກວດຄົນເຂົ້າ-ອອກເມືອງ ກະຊວງປ້ອງກັນຄວາມສະຫງົບແລ້ວ ຫາກມີຄວາມຈຳເປັນຕ້ອງເດີນທາງ ເຂົ້າ-ອອກ ສ ປ ປ ລາວ ຫລາຍເທື່ອ, ກົມກົງສຸນ ກະຊວງການຕ່າງປະເທດ ຈະອອກວີຊາເຂົ້າ-ອອກ ສ ປ ປ ລາວ ຫລາຍເທື່ອໃຫ້ ໂດຍມີກຳນົດເທົ່າກັບກຳນົດການຂຶ້ນທະບຽນຊົ່ວຄາວ ຢູ່ ສ ປ ປ ລາວ.

15.5. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສ ປ ປ ລາວ ໄລຍະສັ້ນ ບໍ່ເກີນ 2 ເດືອນ, ແຕ່ຫາກມີຄວາມຈຳເປັນຕ້ອງເດີນທາງ ເຂົ້າ-ອອກ ສ ປ ປ ລາວ ຫລາຍເທື່ອ, ກົມກົງສຸນ ກະຊວງການຕ່າງປະເທດ ຈະພິຈາລະນາເປັນແຕ່ລະກໍລະນີ ໂດຍຈະອອກວີຊາ ເຂົ້າ-ອອກ ໃຫ້ 3 ຄັ້ງ.

**ມາດຕາ 16. ກຳນົດເວລາການພິຈາລະນາອອກໜັງສືຜ່ານແດນ, ປຶ້ມຜ່ານແດນ, ໃບຜ່ານແດນ ແລະ ວີຊາ ເຂົ້າ-ອອກ ສ ປ ປ ລາວ**

**16.1. ຢູ່ພາຍໃນປະເທດ:**

- ອອກໜັງສືຜ່ານແດນ ກຳນົດ 10 ວັນລັດຖະການ;
- ອອກປຶ້ມຜ່ານແດນ ກຳນົດ 3 ວັນລັດຖະການ;
- ອອກໃບຜ່ານແດນ ກຳນົດ 2 ວັນລັດຖະການ;
- ອອກວີຊາປະເພດຕ່າງໆ ກຳນົດ 3 ວັນລັດຖະການ.

**16.2. ຢູ່ຕ່າງປະເທດ:**

- ອອກວີຊາໄລຍະຍາວ ສຳລັບຜູ້ທີ່ຈະເຂົ້າມາປະຈຳການ ຫລື ມາດຳລົງຊີວິດ ຢ່າງຖາວອນຢູ່ ສ ປ ປ ລາວ ກຳນົດ 15 ວັນລັດຖະການ;
- ອອກວີຊາປະເພດອື່ນໆ ກຳນົດ 3 ວັນລັດຖະການ.

## ຫມວດທີ່ VII
## ລະບຽບການຜ່ານດ່ານ ເຂົ້າ-ອອກ ສ ປ ປ ລາວ

**ມາດຕາ 17. ດ່ານເຂົ້າ-ອອກເມືອງ**

ດ່ານເຂົ້າ-ອອກ ສ ປ ປ ລາວ ມີ ສາມ ( 3 ) ປະເພດດັ່ງນີ້:

17.1. **ດ່ານສາກົນ:** ແມ່ນດ່ານທີ່ອະນຸຍາດໃຫ້ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຖືໜັງສືຜ່ານແດນ ຫລື ປື້ມຜ່ານແດນ ຫລື ໃບຜ່ານແດນ ຫລື ເອກະສານເດີນທາງໃດນຶ່ງ ເຂົ້າ-ອອກ ໄດ້;

17.2. **ດ່ານທ້ອງຖິ່ນ:** ແມ່ນດ່ານທີ່ອະນຸຍາດໃຫ້ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ພົນລະເມືອງຂອງປະເທດທີ່ມີຊາຍແດນຕິດຈອດກັບດ່ານ ທີ່ຖືໜັງສືຜ່ານແດນ ຫລື ປື້ມຜ່ານແດນ ຫລື ໃບຜ່ານແດນ ຫລື ເອກະສານເດີນທາງໃດນຶ່ງ ເຂົ້າ-ອອກ ໄດ້;

17.3. **ດ່ານປະເພນີ:** ແມ່ນດ່ານທີ່ອະນຸຍາດໃຫ້ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ພົນລະເມືອງຂອງປະເທດທີ່ມີຊາຍແດນຕິດຈອດກັບດ່ານ, ມີພູມລຳເນົາຖາວອນຢູ່ບໍລິເວນຊາຍແດນ ທີ່ຖືໃບຜ່ານແດນ ເຂົ້າ-ອອກ ໄດ້.

**ມາດຕາ 18. ລະບຽບການຜ່ານດ່ານ ເຂົ້າ-ອອກ**

18.1. ທຸກໆຄົນທີ່ ເຂົ້າ-ອອກ ສ ປ ປ ລາວ ຕ້ອງຜ່ານທຸກລະບຽບການ ແລະ ການກວດກາຂອງເຈົ້າໜ້າທີ່ປະຈຳດ່ານ.

18.2. ຜູ້ທີ່ເດີນທາງ ເຂົ້າ-ອອກ ສ ປ ປ ລາວ ທີ່ໄດ້ຮັບການຍົກເວັ້ນການກວດກາຂອງເຈົ້າໜ້າທີ່ພາສີປະຈຳດ່ານ ແມ່ນຜູ້ທີ່ຖືໜັງສືຜ່ານແດນການທູດ ແລະ ແຂກຂັ້ນສູງຂອງພັກ-ລັດຖະບານ ຊຶ່ງມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ.

18.3. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈະເຂົ້າມາ ສ ປ ປ ລາວ ໂດຍນຳໃຊ້ໜັງສືຜ່ານແດນ ຫລື ເອກະສານເດີນທາງໃດນຶ່ງ ຕ້ອງຜ່ານ ເຂົ້າ-ອອກ ຕາມດ່ານສາກົນເທົ່ານັ້ນ, ຍົກເວັ້ນເປັນກໍລະນີພິເສດ ຖ້າມີຄວາມຈຳເປັນຕ້ອງໄດ້ຜ່ານດ່ານທີ່ບໍ່ແມ່ນດ່ານສາກົນນັ້ນ ຕ້ອງໄດ້ຮັບການເຫັນດີຢ່າງເປັນທາງການ ຈາກກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບສາກ່ອນ.

18.4. ພົນລະເມືອງຂອງປະເທດ ທີ່ມີຊາຍແດນຕິດຈອດກັນກັບ ສ ປ ປ ລາວ ສາມາດເດີນທາງເຂົ້າ-ອອກ ສ ປ ປ ລາວ ໂດຍຜ່ານດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີໄດ້ ຕາມສັນຍາ ຫລື ການຕົກລົງຂອງສອງຝ່າຍ.

18.5. ຊ່ຽວຊານ, ນັກລົງທຶນ ແລະ ນັກທຸລະກິດຕ່າງປະເທດ ທີ່ມີໂຄງການລົງທຶນ ຢູ່ບັນດາແຂວງທີ່ມີດ່ານທ້ອງຖິ່ນກໍ່ສາມາດ ເຂົ້າ-ອອກ ຜ່ານດ່ານທ້ອງຖິ່ນດັ່ງກ່າວນັ້ນໄດ້,

ແຕ່ ຕ້ອງເຮັດໜັງສືສະເໜີຂໍອະນຸຍາດ ຜ່ານກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເຖິງດ່ານກວດຄົນເຂົ້າ-ອອກເມືອງ ເພື່ອອໍານວຍຄວາມສະດວກໃນການເຂົ້າ-ອອກແຕ່ລະຄັ້ງ.

## ໝວດທີ່ VIII

## ການເຄົາລົບລະບຽບ ກົດໝາຍຂອງ ສ ປ ປ ລາວ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19. ການເຄົາລົບລະບຽບກົດໝາຍຂອງ ສ ປ ປ ລາວ**

19.1. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດທີ່ເຂົ້າມາ ສ ປ ປ ລາວ ຕ້ອງເຄົາລົບລະບຽບ, ກົດໝາຍ, ຮີດຄອງປະເພນີ ແລະ ວັດທະນະທໍາ ຂອງ ສ ປ ປ ລາວ.

19.2. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສ ປ ປ ລາວ ຕ້ອງເສຍຄ່າທໍານຽມ ແລະ ຄ່າບໍລິການ ຕ່າງໆຢ່າງຖືກຕ້ອງຕາມລະບຽບຫລັກການ ຂອງ ສ ປ ປ ລາວ.

19.3. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສ ປ ປ ລາວ ໄລຍະສັ້ນ ແລະ ໄລຍະຊົ່ວຄາວ ຈະບໍ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດ ຫລື ປະກອບອາຊີບຕ່າງໆ ເພື່ອຫາລາຍໄດ້.

19.4. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສ ປ ປ ລາວ ໂດຍນໍາໃຊ້ໜັງສືຜ່ານແດນ ຫລື ເອກະສານເດີນທາງໃດນຶ່ງ ແມ່ນເດີນທາງໄປໄດ້ທຸກໆແຂວງໃນຂອບເຂດທົ່ວປະເທດ ຍົກເວັ້ນເຂດຫວງຫ້າມ. ສໍາລັບຜູ້ນໍາໃຊ້ປື້ມຜ່ານແດນ ຫລື ໃບຜ່ານແດນແມ່ນໄປໄດ້ໃນຂອບເຂດທີ່ກໍານົດໄວ້ໃນສັນຍາ ຫລື ຂໍ້ຕົກລົງ ລະຫວ່າງ ສ ປ ປ ລາວ ກັບປະເທດກ່ຽວຂ້ອງ.

**ມາດຕາ 20. ມາດຕະການຕໍ່ຜູ້ລະເມີດ**

20.1. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ສິ້ນສຸດການປະຕິບັດໜ້າທີ່ ແລະໄດ້ຮັບໜ້າທີ່ໃໝ່ ໂດຍບໍ່ໄດ້ດໍາເນີນຕາມຂັ້ນຕອນຂອງການຂໍອະນຸຍາດຮັບໜ້າທີ່ ແລະ ຢູ່ ສ ປ ປ ລາວ ຄືນໃໝ່ນັ້ນ ຈະບໍ່ໄດ້ຮັບການພິຈາລະນາ ຕໍ່ ຫລື ອອກ ບັດປະຈໍາຕົວ ແລະ ວີຊາ ເຂົ້າ-ອອກຫລາຍເທື່ອໃຫ້.

20.2. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສ ປ ປ ລາວ ໄດ້ກະທໍາຜິດຕໍ່ລະບຽບກົດໝາຍຂອງ ສ ປ ປ ລາວ, ຢູ່ກາຍກໍານົດ ຫລື ມີເຈດຕະນາລີ້ຊ່ອນຢູ່

ສ ປ ປ ລາວ ຈະຖືກປັບໃໝ ແລະ ຖືກດຳເນີນຄະດີ ຕາມລະບຽບກົດໝາຍຂອງ ສ ປ ປ ລາວ.

20.3. ພົນລະເມືອງລາວ, ນິຕິບຸກຄົນ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດທີ່ໃຫ້ຄວາມຮ່ວມມື ແລະ ມີສ່ວນຮ່ວມໃນການໃຫ້ທີ່ພັກພາອາໃສ ແກ່ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອຢູ່ ສ ປ ປ ລາວ ແບບຜິດກົດໝາຍໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງນັ້ນ ຈະຖືກປັບໃໝ ແລະ ຖືກດຳເນີນຄະດີຕາມລະບຽບກົດໝາຍຂອງ ສ ປ ປ ລາວ.

20.4. ເຈົ້າໜ້າທີ່ງກ່ຽວຂ້ອງຂອງ ສ ປ ປ ລາວ ທີ່ອະນຸຍາດໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຢູ່ ສ ປ ປ ລາວ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ ຈະຖືກດຳເນີນຄະດີຕາມກົດໝາຍເຊັ່ນດຽວກັນ.

## ໝວດທີ່ IX
## ອົງການທີ່ມີໜ້າທີ່ຮັບຜິດຊອບ ແລະ ການປະສານງານ

### ມາດຕາ 21. ອົງການທີ່ມີໜ້າທີ່ຮັບຜິດຊອບ

ກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ຮັບຜິດຊອບໂດຍກົງ ຕໍ່ການຄຸ້ມຄອງການເຂົ້າ-ອອກ ແລະ ແຈ້ງຢູ່ ສ ປ ປ ລາວ ຂອງ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ.

### ມາດຕາ 22. ການປະສານງານ

ໃນກໍລະນີມີບັນຫາເກີດຂຶ້ນ ຫລື ມີບັນຫາທີ່ພົວພັນກັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຢູ່ ສ ປ ປ ລາວ ບັນດາກະຊວງ, ອົງການ, ແຂວງ, ນະຄອນຫລວງວຽງຈັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ກະຊວງປ້ອງກັນຄວາມສະຫງົບ ເພື່ອແຈ້ງຕໍ່ໃຫ້ກະຊວງການຕ່າງປະເທດຊາບໂດຍດ່ວນ.

## ຫມວດທີ່ X
## ຄ່າທຳນຽມ.

### ມາດຕາ 23. ຄ່າທຳນຽມ

23.1. ຄ່າທຳນຽມການອອກໜັງສືຜ່ານແດນ, ໜັງສືເດີນທາງ ທີ່ໃຊ້ຕາງໜັງສືຜ່ານແດນ, ໜັງສືເດີນທາງຕ່າງໆ, ຄ່າວີຊາ, ຄ່າອອກບັດປະຈຳຕົວ ແລະ ຄ່າປັບໃໝຕ່າງໆ (ຍົກເວັ້ນຄ່າລ່ວງເວລາ ແລະ ຄ່າບໍລິການຕ່າງໆ) ແມ່ນຖືເປັນລາຍຮັບຂອງລັດ.

23.2. ອັດຕາຄ່າທຳນຽມ ແລະ ຄ່າປັບໃໝຕ່າງໆແມ່ນປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

23.3. ການເກັບຄ່າທຳນຽມ ແລະ ຄ່າປັບໃໝຕ່າງໆ ຕ້ອງເກັບເຕັມເທື່ອດຽວ. ຫລັງຈາກນັ້ນ, ບໍ່ໃຫ້ເກັບອີກ ບໍ່ວ່າຢູ່ຕາມດ່ານ ເຂົ້າ-ອອກ ເມືອງ ກໍ່ຄືໜ່ວຍງານຕ່າງໆໃນທົ່ວປະເທດ.

## ໝວດທີ່ XI
## ບົດບັນຍັດສຸດທ້າຍ

**ມາດຕາ 24. ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງວຽງຈັນ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 25. ຜົນສັກສິດ.**

ດຳລັດສະບັບນີ້ປ່ຽນແທນດຳລັດສະບັບເລກທີ 031/ນຍ, ລົງວັນທີ 02 ເມສາ 1998 ວ່າດ້ວຍການເຂົ້າ-ອອກ/ອອກ-ເຂົ້າ ສປປ ລາວ ຂອງພົນລະເມືອງລາວ ແລະ ຊາວຕ່າງປະເທດ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກຳນົດ ແລະ ລະບຽບອື່ນໆທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ

ບົວສອນ ບຸບຜາວັນ